| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດດ້ານວິຊາການດໍາເນີນກິດຈະການຮ້ານຂາຍຢາ ແລະ ເຄື່ອງມືສັດຕະວະແພດ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດໍາເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoAF-LFD-11 | 04.01.2018 | ກົມລ້ຽງສັດ ແລະ ການປະມົງ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | A - ກະສິກໍາ, ປ່າໄມ້ ແລະ ການປະມົງ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ຮ້ານຈະໃຫ້ຄໍາແນະນໍາ ແລະ ໃຫ້ຂໍ້ມູນໂດຍກົງຕໍ່ລູກຄ້າ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ດັ່ງນັ້ນ ຈື່ງຈໍາເປັນຕ້ອງຮັບປະກັນວ່າ ຮ້ານດັ່ງກ່າວ ແມ່ນມີຄຸນະສົມບັດຕາມທີ່ຈໍາເປັນ ແລະ ການອອກໃບອະນຸຍາດແມ່ນເປັນເຄື່ອງຮັບປະກັນວ່າ ຮ້ານດັ່ງກ່າວ ແມ່ນໄດ້ຄຸນະພາບ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດໍາເນີນກິດຈະການຂາຍຢາ, ນໍາເຂົ້າ ແລະ ສົ່ງອອກຢາປ້ອງກັນ, ຢາປິ່ນປົວພະຍາດສັດ ແລະ ອຸປະກອນຕ່າງໆ ທີ່ນໍາມາໃຊ້ເຂົ້າໃນການບໍລິການສັດຕະວະແພດ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ບໍ່ມີ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ບໍ່ມີ |
| ຄໍາເຫັນອື່ນ ທີ່ຕິດພັນກັບ ໃບອະນຸຍາດ | 1. ຫ້າມຕັ້ງຮ້ານ ຢູ່ໃນການຄຸ້ມຄອງຂອງເຂດຈັດສັນຕະຫລາດສົດ; 2. ຫ້າມຍົກຍ້າຍຮ້ານ ໂດຍບໍ່ໄດ້ຮັບອະນຸຍາດຕາມຫລັກວິຊາການ; 3. ຫ້າມປ່ຽນຜູ້ດໍາເນີນການຂາຍ ໂດຍບໍ່ແຈ້ງໃຫ້ເຈົ້າໜ້າທີ່ສັດຕະວະແພດຮັບຮູ້ 4. ຫ້າມຂາຍຢາ ປົນກັບຢາປິ່ນປົວສໍາລັບຄົນ ແລະ ເກີນບັນຊີທີ່ຕົນໄດ້ຮັບອະນຸຍາດໃຫ້ຂາຍ |

| ຄຸນະສົມບັດ ແລະ ເອກະສານປະກອບ |
|---|

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການພິຈາລະນາຄໍາຮ້ອງ ໃນການອອກໃບອະນຸຍາດ | 10 | ກົດໝາຍກ່ຽວຂ້ອງບໍ່ໄດ້ລະບຸໄລຍະເວລາໃນການພິຈາລະນາໄວ້ ແຕ່ເຈົ້າໜ້າທີ່ແຈ້ງວ່າ ໄລຍະເວລາໃນການພິຈາລະປົກກະຕິແມ່ນບໍ່ກາຍ 10 ວັນລັດຖະການ |
| ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ | 1. ມີສຸຂະພາບແຂງແຮງ ແລະ ອາຍຸບໍ່ຕໍ່າກວ່າ 20 ປີ; ມີພູມລໍາເນົາຢູ່ ສປປ ລາວ ຖາວອນບໍ່ຕໍ່າກວ່າ 5 ປີ; ບໍ່ຢູ່ໃນໄລຍະດໍາເນີນຄະດີ ຫຼື ຖືກປະຕິບັດວິໄນ; ບໍ່ມີປະຫວັດລົ້ມລະລາຍທາງດ້ານທຸລະກິດມາກ່ອນ; 2. ມີສະຖານທີ່ຕັ້ງ ແລະ ອຸປະກອນຮັບໃຊ້ທີ່ໄດ້ມາດຕະຖານ ຄື: (i) ສຖານທີ່ຕັ້ງຕ້ອງມີເນື້ອທີ່ບໍ່ຕໍ່າກວ່າ 12 ຕາແມັດ, ເປັນຫ້ອງສະເພາະທີ່ບໍ່ປົນເປກັບທີ່ພັກເຊົາ ຫລື ບ່ອນຂາຍເຄື່ອງອື່ນໆ ທີ່ບໍ່ແມ່ນຢາ ແລະ ມີຫ້ອງສາງຕ່າງຫາກ ຊຶ່ງມີເນື້ອທີ່ບໍ່ຕໍ່າກວ່າ 9 ຕາແມັດ; (ii) ມີອຸປະກອນຮັບໃຊ້ ໃນການເກັບຮັກສາ ແລະ ວາງຈໍາໜ່າຍຢ່າງຄົບຖ້ວນ ເຊັ່ນ ຕູ້ແກ້ວ, ຕູ້ເຢັນ, ມີກັບ ແລະ ຖົງຢາທີ່ສະອາດ ທີ່ຈໍ້າກາຮ້ານ ເພື່ອໃສ່ຢາ; (iii) ມີປ້າຍຮ້ານຊຶ່ງລະບຸລາຍລະອຽດຄົບຖ້ວນ; 3. ເປັນຜູ້ທີ່ໄດ້ຮັບການສຶກສາທາງດ້ານສັດຕະວະແພດຊັ້ນປະລິນຍາຕີ ຫຼື ທຽບເທົ່າຂຶ້ນໄປ; 4. ມີຜູ້ຊ່ວຍທີ່ມີວິຊາສະເພາະດ້ານສັດຕະວະແພດ ປະຈໍາຢູ່ຮ້ານໃນເວລາທີ່ຕົນເອງບໍ່ຢູ່. | |
| ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ? | ໃນກໍລະນີທີ່ຜູ້ຮ້ອງຂໍບໍ່ມີຄຸນສົມບັດແລະບໍ່ສາມາດປະຕິບັດຕາມເງື່ອນໄຂໄວ້ໄດ້. | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| ໃບອະນຸຍາດມີກໍານົດອາຍຸ ຫລືບໍ່? | ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ? |
| ແມ່ນແລ້ວ | 12 |
| ຂັ້ນຕອນ ແລະ ເງື່ອນໄຂສໍາລັບການຕໍ່ອາຍຸໃບອະນຸຍາດ | ກ່ອນໃບອະນຸຍາດຈະໝົດອາຍຸການນໍາໃຊ້ 1 ເດືອນ ຜູ້ປະກອບການຕ້ອງປະກອບເອກະສານເພື່ອຂໍຕໍ່ດັ່ງນີ້: (i) ໃບຄໍາຮ້ອງຂໍສືບຕໍ່ດໍາເນີນກິດຈະການຂາຍຢາແລະເຄື່ອງມືສັດຕະວະແພດ; (ii) ໃບຢັ້ງຢືນສຸຂະພາບທີ່ອອກໃຫ້ບໍ່ກາຍ 3 ເດືອນ; (iii) ໃບຢັ້ງຢືນທີ່ຢູ່ປັດຈຸບັນ ທີ່ມີຮູບຕິດ; (iv) ຮູບຖ່າຍບໍ່ເກີນ 1 ປີ, ຂະໜາດ 3x4 ຈໍານວນ 3 ໃບ; (v) ບົດບັນທຶກການກວດກາຮ້ານຂາຍຢາແລະເຄື່ອງມືສັດຕະວະແພດຈາກເຈົ້າໜ້າທີ່ສັດຕະວະແພດ. |

## ຄ່າທໍານຽມ

| ຄ່າທໍານຽມ | | | | |
|---|---|---|---|---|
| **ມີຄ່າທໍານຽມ ແບບຟອມຄໍາ ຮ້ອງ ຫລື ບໍ່?** | **ຄ່າບໍລິການວິຊາ ການ** | **ຄ່າທໍານຽມ** | **ຄ່າ ແບບຟອມ ຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 0.00 | 0.00 | 0.00 | 0.00 |
| **ຄໍາເຫັນ** | ສໍາລັບຄ່າທໍານຽມຕ່າງໆແມ່ນພວກເຮົາຍັງສະເໜີຂໍອະນຸມັດໃນດໍາລັດ03 ຢູ່ເຊິ່ງຍັງຢູ່ໃນຂັ້ນຕອນພິຈາລະນາຂອງຄະນະລັດຖະບານ | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| **ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າ ແບບຟອມ ຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 0.00 | 0.00 | 0.00 | 0.00 |
| **ຄໍາເຫັນ** | ສໍາລັບຄ່າທໍານຽມຕ່າງໆແມ່ນພວກເຮົາຍັງສະເໜີຂໍອະນຸມັດໃນດໍາລັດ03 ຢູ່ເຊິ່ງຍັງຢູ່ໃນຂັ້ນຕອນພິຈາລະນາຂອງຄະນະລັດຖະບານ | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່ກົດລະບຽບ** | **ເລກທີ** | **ວັນທີ** | **ຄໍາເຫັນ** |
| ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ຫ້ອງປິ່ນປົວສັດ, ຮ້ານຂາຍຢາ ແລະ ເຄື່ອງມືສັດຕະວະແພດ | 1973/ກປ | 23.08.2012 | ໝວດທີ 3 ຮ້ານຂາຍຢາ ແລະ ເຄື່ອງມືສັດຕະວະແພດ (ມາດຕາ 11 ຫາ ມາດຕາ 14) |
| ກົດໝາຍວ່າດ້ວຍ ການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) | 08/ສພຊ | 11.11.2016 | |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ບັນຊີຢາ ແລະ ເຄື່ອງມືສັດຕະວະແພດ ທີ່ຈະຂາຍ |
| ບົດລາຍງານການກວດກາສະຖານທີ່ ແລະ ສຸຂະພິບານ |

# ລາຍລະອຽດຂໍ້ມູນ ສໍາລັບ ໃບອະນຸຍາດ
## ໂຄງການທົບທວນ ແລະ ປັບປຸງລະບຽບການທີ່ຕິດພັນກັບ ການສ້າງຕັ້ງທຸລະກິດ ໃນ ສປປ ລາວ

| ເອກະສານປະກອບ |
|---|
| ໃບຢັ້ງຢືນວຸດທິການສຶກສາ |
| ແຜນວາດທີ່ຕັ້ງຂອງວິສາຫະກິດ |
| ໃບແຈ້ງໂທດ |
| ຮູບ |
| ໃບຢັ້ງຢືນທີ່ຢູ່ |
| ໃບຢັ້ງຢືນສຸຂະພາບ |
| ຊີວະປະຫວັດ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | 3 | 0 |